ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 0269/ກປ

ນະຄອນຫຼວງວຽງຈັນ, ວັນທີ 18 MAY 2021

# ໜັງສືແຈ້ງຕອບ

ຮຽນ: ທ່ານ ລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ທີ່ນັບຖື.
ເລື່ອງ: ຢັ້ງຢືນແຜນການສ້າງ ແລະ ປັບປຸງກົດໝາຍ 05 ປີ (2021-2025) ຂອງກະຊວງກະສິກຳ ແລະ ປ່າໄມ້.

- ອີງຕາມ ກົດໝາຍວ່າດ້ວຍການສ້າງນິຕິກຳ ເລກທີ 19/ສພຊ, ລົງວັນທີ 12 ກໍລະກົດ 2012;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ເລກທີ 99/ນຍ, ລົງວັນທີ 09 ມີນາ 2017;
- ອີງຕາມ ໜັງສືທາງລັດຖະການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ148/ຫສນຍ, ລົງວັນທີ 09 ເມສາ 2021.

ເພື່ອກຽມຄວາມພ້ອມໃຫ້ແກ່ການສ້າງ ແລະ ປັບປຸງກົດໝາຍ ທີ່ຢູ່ໃນຄວາມຮັບຜິດຊອບຂອງຂະແໜງການກະສິກຳ ແລະ ປ່າໄມ້ ນັ້ນ, ຜ່ານມາ ກະຊວງກະສິກຳ ແລະ ປ່າໄມ້ ໄດ້ຄົ້ນຄວ້າ ແລະ ສະເໜີ ກະຊວງຍຸຕິທຳ (ໜັງສືສະເໜີ ເລກທີ 0025/ກປ, ລົງວັນທີ 13 ມັງກອນ 2021) ເພື່ອພິຈາລະນາເຂົ້າໃນແຜນການສ້າງ ແລະ ປັບປຸງກົດໝາຍ 05 ປີ ຂອງສະພາແຫ່ງຊາດ ຊຸດທີ IX (2021-2025) ລວມມີ 04 ສະບັບ ໃນນີ້ສ້າງໃໝ່ 01 ສະບັບ ຄື: ກົດໝາຍວ່າດ້ວຍສະຫະກອນ ແລະ ປັບປຸງ 03 ສະບັບ ຄື: ກົດໝາຍວ່າດ້ວຍກະສິກຳ, ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ແລະ ກົດໝາຍວ່າດ້ວຍການປະມົງ ຊຶ່ງບັນດາກົດໝາຍດັ່ງກ່າວ ໄດ້ຖືກບັນຈຸໃນ "ຮ່າງ" ແຜນການສ້າງ ແລະ ປັບປຸງກົດໝາຍ 05 ປີຂອງສະພາແຫ່ງຊາດຊຸດທີ IX (2021–2025) ໝົດແລ້ວ.

ເພື່ອປະຕິບັດຕາມ ໜັງສືທາງລັດຖະການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 148/ຫສນຍ, ລົງວັນທີ 09 ເມສາ 2021 ນັ້ນ, ກະຊວງກະສິກຳ ແລະ ປ່າໄມ້ ຈຶ່ງຢັ້ງຢືນຄືນ ແຜນການສ້າງ ແລະ ປັບປຸງກົດໝາຍ ແລະ ຄວາມພ້ອມໃນການຈັດຕັ້ງປະຕິບັດ ຕາມກຳນົດເວລາ ດັ່ງນີ້:

| ລ/ດ | ຊື່ກົດໝາຍ | ໃໝ່ | ປັບປຸງ | ຄາດຄະເນ (ປີ) | ກົມຮັບຜິດຊອບ |
|---|---|---|---|---|---|
| 1 | ກົດໝາຍ ວ່າດ້ວຍສັດນ້ຳ ແລະ ສັດປ່າ | | ✓ | ທ້າຍປີ 2022 | ກົມປ່າໄມ້ |
| 2 | ກົດໝາຍ ວ່າດ້ວຍການປະມົງ | | ✓ | ທ້າຍປີ 2022 | ກົມລ້ຽງສັດ ແລະ ການປະມົງ |
| 3 | ກົດໝາຍ ວ່າດ້ວຍສະຫະກອນ | ✓ | | ທ້າຍປີ 2023 | ກົມພັດທະນາຊົນນະບົດ ແລະ ສະຫະກອນ |



สแกนด้วย CamScanner

| | | | | | |
|---|---|---|---|---|---|
| 4 | ກົດໝາຍວ່າດ້ວຍກະສິກຳ | | ✓ | ທ້າຍປີ 2023 | ກົມປູກຝັງ |
| 5 | ກົດໝາຍວ່າດ້ວຍຊົນລະປະທານ | | ✓ | ທ້າຍປີ 2024 | ກົມຊົນລະປະທານ |

ດັ່ງນັ້ນ, ຈຶ່ງສະເໜີມາຍັງທ່ານ ເພື່ອພິຈາລະນາ ຕາມເຫັນສົມຄວນດ້ວຍ.

ລັດຖະມົນຕີ

ປອ. ເພັດ ພົມພິພັກ

ບ່ອນນຳສົ່ງ:

1. ທ່ານ ລມຄ, ຮອງ ທ່ານນະ — 01 ສະບັບ (ໃຫ້ຕາງລາຍງານ);
2. ຫ້ອງການກະຊວງ — 01 ສະບັບ (ເພື່ອຊາບ);
3. ກົມນະໂຍບາຍ ແລະ ນິຕິກຳ — 01 ສະບັບ (ເພື່ອຊຸກຍູ້);
4. ກົມປ່າໄມ້ — 01 ສະບັບ (ເພື່ອກະກຽມ);
5. ກົມລ້ຽງສັດ ແລະ ການປະມົງ — 01 ສະບັບ (ເພື່ອກະກຽມ);
6. ກົມພັດທະນາຊົນນະບົດ ແລະ ສະຫະກອນ — 01 ສະບັບ (ເພື່ອກະກຽມ);
7. ກົມປູກຝັງ — 01 ສະບັບ (ເພື່ອກະກຽມ);
8. ກົມຊົນລະປະທານ — 01 ສະບັບ (ເພື່ອກະກຽມ);
9. ເກັບຮັກສາໄວ້ — 01 ສະບັບ.



สแกนด้วย CamScanner